**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

********✧********

**ຄະນະກຳມະການຄຸ້ມຄອງແຫ່ງຊາດ(ຄຄຊ)**
**ເພື່ອການແກ້ໄຂ ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່**
**ສປປລາວ**

National Regulatory Authority (NRA)
for UXO/Mine Action Sector in Lao PDR
(NRA Office)

# ແຜນຍຸດທະສາດສຳລັບວຽກງານເກັບກູ້ ລບຕ ໃນ ສປປ ລາວ, 2009-2012

ວິໃສທັດຂອງແຜນງານ: ຢູ່ ສປປ ລາວ

- *ຊຸມຊົນຕ່າງໆ ສາມາດຮ້ອງຂໍ ແລະ ຮັບບັນດາຊັບພະຍາກອນເກັບກູ້ ລບຕແຫ່ງຊາດເພື່ອຍົກຍ້າຍເອົາ ລບຕ ອອກຈາກບ່ອນທີ່ຖືກພົບພໍ້ ຊຶ່ງເປັນຜົນໃຫ້ພົນລະເມືອງຕົກຢູ່ໃນຄວາມສ່ຽງ .*
- *ບັນດາຊຸມຊົນທີ່ທຸກຍາກ ແລະດ້ອຍໂອການສາມາດຮ້ອງຂໍ ແລະ ຮັບການບໍລິການເກັບກູ້ເນື້ອທີ່ດິນ ທີ່ຖືກຜົນກະທົບຈາກ ລບຕ ຊຶ່ງແມ່ນຄວາມຈຳເປັນເພື່ອຮັບປະກັນໃຫ້ແກ່ການດຳລົງຊີວິດ.*
- *ເພື່ອຄວາມເໝາະສົມໃຫ້ບັນດາໂຄງການພັດທະນາ ແລະ ໂຄງການທຸລະກິດຕ່າງໆ ຖືເອົາວຽກງານ ເກັບກູ້ລະເບີດບໍ່ທັນແຕກ ເປັນພາກສ່ວນໜຶ່ງ ໃນການວາງແຜນການ ແລະ ງົບປະມານຂອງຕົນ.*

| ເປົ້າໝາຍ | ຈຸດປະສົງ | ກິດຈະກຳ | ຄວາມຮັບຜິດຊອບ |
|---|---|---|---|
| 1. ຍຸດທະສາດເກັບກູ້ ລບຕ ທີ່ມີເປົ້າສຸມໃສ່ບັນດາກຸ່ມຄົນທຸກຍາກ ແລະ ອ່ອນແອ | a. ລະບຸ/ກຳນົດໃຫ້ໄດ້ ວ່າຊຸມຊົນໃດທີ່ທຸກຍາກ ຫຼື ອ່ອນແອ ແລະ ກຸ່ມສ່ຽງນັ້ນມີຢູ່ໃສ.<br>b. ສະໜອງກົນໄກການລາຍງານ ແລະ ຕອບສະໜອງໃຫ້ແກ່ຄຳຂໍຮ້ອງຂອງຊຸມຊົນໃນການເກັບກູ້ລະເບີດ.<br>c. ສະໜອງລະບົບກຳນົດບູລິມະສິດສຳລັບຂື້ນແຜນເພື່ອຕອບສະໜອງຕໍ່ຄຳສະເໜີຮ້ອງຂໍເກັບກູ້ ລບຕ.<br>d. ເພື່ອຮັບປະກັນໃຫ້ມີການຕອບສະໜອງແບບທັນການເມື່ອມີການຂໍຮ້ອງໃຫ້ເກັບກູ້ ລບຕ ຈາກຊຸມຊົນທີ່ຖືກກະທົບ.<br>e. ເພື່ອນຳເອົາປາເດັນບົດບາດຍິງຊາຍເຂົ້າ | i) ວິເຄາະຂໍ້ມູນທີ່ມີຢູ່ແລ້ວເພື່ອຮູ້ໄດ້ວ່າຊຸມຊົນໃດທີ່ທຸກຍາກ ແລະ ອ່ອນແອ ເນື່ອງມາຈາກການມີ ລບຕ ຕົກຄ້າງ..<br>ii) ທົບທວນແບບມີສ່ວນຮ່ວມ ແລະ ເສີມຂະຫຍາຍລະບຽບຂັ້ນຕອນການລາຍງານ, ການຮັບ ແລະ ຕອບສະໜອງຄຳຮ້ອງຂໍໃນການເກັບກູ້ ລບຕ.<br>iii) ພັດທະນາວິທີການຂັ້ນຕອນຢ່າງຈະແຈ້ງເພື່ອກຳນົດບູລິມະສິດທີ່ແນໃສ່ແກ້ໄຂຄຳຮ້ອງຂໍໃນການເກັບກູ້ ລບຕ.<br>iv) ສະໜັບສະໜູນ ແລະ ຊຸກຍູ້ ໃຫ້ອຳນາດການປົກຄອງທ້ອງຖິ່ນໃນການລາຍງານກ່ຽວກັບຜູ້ໄດ້ຮັບບາດເຈັບຍ້ອນ ລບຕ ແລະ ຮັບປະກັນວ່າສະຖິຕິອຸປະຕິເຫດຈາກ ລບຕ ທັງໝົດໄດ້ຖືກລາຍງານໄປຫາຜູ້ເກັບກຳຂໍ້ມູນ ເພື່ອບັນຈຸເຂົ້າໃນລະບົບຂໍ້ມູນຜູ້ໄດ້ຮັບເຄາະຮ້າຍຈາກ ລບຕ ໃນລາວ (LVIS)<br>v) ປະສານງານກັບໜ່ວຍງານສຶກສາກ່ຽວກັບຄວາມຄວາມສ່ຽງໄພຈາກ ລບຕ (MRE) ແລະ ໜ່ວຍງານຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ(VA). | ຫ້ອງການຄຄຊ ໂດຍການສະໜັບສະໜູນຊ່ວຍເຫຼືອຈາກສະມາຊິກກຸ່ມວິຊາການເກັບກູ້ (Clearance TWG)<br>ໜ່ວຍປະຕິບັດງານ ຄຄຊພ້ອມກັບໜ່ວຍງານໂຄສະນາຄວາມສ່ຽງຈາກ ລບຕ (MRE)<br>ຫ້ອງການຄຄຊ ຮ່ວມກັບບັນດາກຸ່ມເຮັດວຽກວິຊາການ (TWGs) ,ຜູ້ປະຕິບັດງານ,ລວມທັງຊຸມຊົນທີ່ຕົກຢູ່ໃນຄວາມສ່ຽງ, ກະຊວງແຜນການ, ລົງທຶນ ແລະ ກ/ຊ ແຮງງານ-ສະຫັວດດີການສັງຄົມ. |

| | | | |
|---|---|---|---|
| | ໃນກິດຈະກຳເກັບກູ້ລບຕ. | | ບັນດາກຸ່ມວິຊາການ ແລະ ຜູ້ປະຕິບັດງານດ້ານ ລບຕ.<br><br>ຫ້ອງການຄຄຊ, ຜູ້ປະຕິບັດງາດ້ານ ລບຕ, ອຳນາດການປົກຄອງທອ້ງຖິ່ນ, ລະບົບຖານຂໍ້ມູນຜູ້ຖືກຮ້າຍຈາກ ລບຕ ລາວ(LVIS). |
| 2. ການຕອບສະໜອງດ້ານແຜນງານເກັບກູ້ລະເບີດແບບຍືນຍົງ. | a. ວຽກເກັບກູ້ ລບຕ,ຕ້ອງຕິດພັນກັບບັນດາແຜນການ ບູລິມະສິດ ແລະ ງົບປະມານຂອງລັດຖະບານ.<br>b. ວຽກເກັບກູ້ ລບຕ ຕ້ອງຕິດພັນກັບບັນດາແຜນພັດທະນາ ແລະ ກິດຈະກຳຕ່າງໆ.<br>c. ເພື່ອລະບຸຊີ່ແຫຼ່ງທຶນທີ່ເປັນທາງເລືອກສຳລັບວຽກງານເກັບກູ້ ລບຕ.<br>d. ຊ່ວຍສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນ ໃນການແກ້ໄຂໄພຂົ່ມຂູ່ຈາລບຕ<br>e. ເພື່ອຊຸກຍູ້ໃຫ້ລັດຖະບານລາວຮັບຮູ້ ແລະ ມີສ່ວນຮ່ວມໃນເລື່ອງກົດໝາຍ, ສົນທິສັນຍາສາກົນ ແລະ ລະດັບຊາດ | i) ຊຸກຍູ້ໃຫ້ລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ນຳເອົາວຽກງານເກັບກູ້ ລບຕ ເຂົ້າໃນບັນດາແຜນພັດທະນາ ແລະ ງົບປະມານ;<br>ii) ລະດົມຂົນຂວາຍ ແລະ ປຶກສາກັບຜູ້ໃຫ້ທຶນ, ແລະ ຜູ້ປະຕິບັດງານດ້ານພັດທະນາ ລວມທັງກຸ່ມທຸລະກິດ ແລະ ມະນຸດສະທຳ ກ່ຽວກັບຄວາມສຳຄັນຂອງວຽກງານເກັບກູ້ ລບຕ ແລະ ໃຫ້ຖືວ່າວຽກງານເກັບກູ້ ລບຕ ເປັນຫົວຂໍ້ທີ່ພົວພັນເຖິງການສ້າງບັນດາແຜນການ, ງົບປະມານ ແລະ ການຕິກລົງຕ່າງໆຂອງທຸກຂະແໜງວຽກງານ;<br>iii) ສະໜັບສະໜູນ ແລະ ພັດທະນາບັນດາໂຄງການຕ່າງໆ ຊຶ່ງສານຕໍ່ບັນດາຍຸດທະສາດທ້ອງຖິ່ນໃນການແກ້ໄຂບັນຫາ ແລະ ຊຸກຍູ້ໃຫ້ຊຸມຊົນມີຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການຫຼຸດຜ່ອນຄວາມສ່ຽງ, (ບັນດາອາສາສະໝັກບ້ານ/ຜູ້ຊື້ຂາຍເຫຼັກເສດ/ຕຳຫຼວດ)??<br>iv) ຂົນຂວາຍຫາການສະໜັບສະໜູນເພື່ອໃຫ້ຍຶດໝັ້ນ ແລະ ປະຕິບັດບັນດາກົດໝາຍສາກົນ ແລະ ກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງເໝາະສົມໃນເລື່ອງອາວຸດ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. | ຫ້ອງການຄຄຊ,ອົງການສະຫະປະຊາຊາດ ແລະ ຜູ້ໃຫ້ທຶນ, ລວມທັງກອງປະຊຸມໂຕະມົນຜູ້ໃຫ້ທຶນ<br><br>ຫ້ອງການຄຄຊ,ອົງການສະຫະປະຊາຊາດ ແລະ ຜູ້ໃຫ້ທຶນ, ລວມທັງກອງປະຊຸມໂຕະມົນຜູ້ໃຫ້ທຶນ<br><br>ຄະນະກຳມະການ ຄຄຊ,ອຳນາດການປົກຄອງທ້ອງຖິ່ນ ,ສປຊ, UNICEF.<br><br>ຫ້ອງການຄຄຊ, ສປຊ ແລະ ບັນດາອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ |
| 3. ການປະສານງານ ແລະ ການຄຸ້ມຄອງຕອບສະໜອງ ການເກັບກູ້ ລບຕ ແບບມີປະສິດທິຜົນ | a. ພັດທະນາຄວາມສາມາດຂອງ ຄຄຊໃນການປະສານງານ ແລະ ວາງລະບຽບ, ແຜນການເກັບກູ້ ລບຕ ແຫ່ງຊາດ.<br>b. ພັດທະນາຄວາມສາມາດຂອງອຳນາດການປົກຄອງທ້ອງຖິ່ນເພື່ອປະສານກັບບັນດາກິດຈະກຳເກັບກູ້ ລບຕ ແນໃສ່ຫຼຸດຜ່ອນຄວາມສ່ຽງ ແລະ ການພັດທະນາ.<br>c. ເພື່ອປະກອບສ່ວນໃນການເກັບກຳ,ສະໜອງ ແລະ ການປັບປຸງຂໍ້ມູນຜູ້ໄດ້ຮັບບາດເຈັບຈາກ ລບຕ ແລະ ຮັບປະກັນນຳໃຊ້ ແລະ ວິເຄາະສຳລັບ | i) ດຳເນີນການປະເມີນດ້ານການພັດທະນາຂີດຄວາມສາມາດຂອງ ຄຄຊ ກ່ຽວກັບການປະສານງານ, ການບໍລິຫານຄຸ້ມຄອງ ແລະ ການພັດທະນາກ່ຽວກັບວຽກງານເກັບກູ້ລບຕ ພ້ອມທັງການປະຕິບັດແຜນສ້າງຄວາມສາມາດ;<br>ii) ປະກອບບັນດາແຜນວຽກ ແລະ ບົດລາຍງານສຳລັບແຜນງານເກັບກູ້ ລບຕ ປະຈຳປີ ລວມທັງວຽກຂອງ ຄຄຊ ແລະ ຜູ້ປະຕິບັດງານເກັບກູ້ ລບຕ.<br>iii) ຈັດປະຊຸມ ກຸ່ມວິຊາການເກັບກູ້ ລບຕ ເປັນປົກກະຕິ<br>iv) ທົບທວນ ບັນດາຂອບເຂດໜ້າວຽກຂອງກອງປະຊຸມກຸ່ມວິຊາການ ແລະ ບັນດາສາມະຊິກຂອງກຸ່ມວິຊາການ<br>v) ຊຸກຍູ້ໃຫ້ອຳນາດການປົກຄອງທ້ອງຖິ່ນໃຫ້ລະບຸ ພ້ອມທັງບັນທຶກຂໍ້ມູນກ່ຽວກັບການເກັບກູ້ ລບຕ, ລະເບີດແຕ່ລະສະໜິດ ແລະ ບັນດາເນື້ອທີ່ເກັບກູ້ ພ້ອມທັງຄວາມຮຽກຮ້ອງຕ້ອງການຕ່າງໆ.<br>vi) ຊຸກຍູ້ໃຫ້ບັນດາອຳນາດການປົກຄອງທ້ອງຖິ່ນກຳນົດບັນດາພາລະບົດບາດ ແລະ ບັນດາຄວາມຮັບຜິດຊອບໃນການຄຸ້ມຄອງບັນດາໂຄງການເກັບກູ້ ລບຕ; | ຫ້ອງການຄຄຊ, ສປຊ<br><br>ຫ້ອງການຄຄຊ ພ້ອມກັບການປ້ອນຂໍ້ມູນຈາກຜູ້ປະຕິບັດງານ<br><br>ຫ້ອງການຄຄຊໂດຍການສະໜັບສະໜູນຈາກຜູ້ໃຫ້ທຶນ<br><br>ໜ່ວຍງານເຮັດວຽກວິຊາການເກັບກູ້ ລບຕ ຫ້ອງການຄຄຊ<br><br>ຫ້ອງການ ຄຄຊ,ອຳນາດການປົກຄອງຂັ້ນ |

| | | | |
|---|---|---|---|
| | ການວາງແຜນ ແລະ ຕິດຕາມໂຄງການ. | vii) ຊຸກຍູ້ໃຫ້ບັນດາອຳນາດການປົກຄອງທ້ອງຖິ່ນ ໃຫ້ເອົາວຽກງານເກັບກູ້ ລບຕ ເຂົ້າມີສ່ວນຮ່ວມໃນໂຄງການພັດທະນາຕ່າງໆ ລວມທັງການພັດທະນາຊົນນະບົດ, ກະສິກຳ ແລະ ການກໍ່ສ້າງ.<br>viii) ເຂົ້າຮ່ວມໃນກອງປະຊຸມປຶກສາຫາລື ກ່ຽວກັບການພັດທະນາ, ການຈັດຕັ້ງປະຕິບັດ ແລະ ນຳໃຊ້ລະບົບຂໍ້ມູນຂ່າວສານດຜູ້ປະສົບເຄາະຮ້າຍຈາກ ລບຕ; | ແຂວງ ແລະ ຜູ້ເກັບກູ້ ລບຕ ທີ່ກ່ຽວຂ້ອງ<br>ຫ້ອງການ ຄຄຊ,ອຳນາດການປົກຄອງຂັ້ນແຂວງ ແລະ ຜູ້ເກັບກູ້ ລບຕ ທີ່ກ່ຽວຂ້ອງ<br>ອົງການວາງແຜນການ, ແມ່ຍິງລາວ, ຊາວໜຸ່ມ, ແນວລາວສ້າງຊາດ, ກ/ຊແຜນການ ແລະ ການລົງທຶນ<br>ຫ້ອງການຄຄຊ ແລະ ຜູ້ປະຕິບັດງານ |
| 4. ຕິດຕາມແຜນງານ ແລະ ການຕອບສະໜອງການເກັບກູ້ ລບຕ ຢ່າງມີປະສິດທິຜົນ. | a. ສ້າງ ແລະ ຄຸ້ມຄອງລະບົບລາຍງານສູນກາງ ສຳລັບບັນດາກິດຈະກຳດ້ານເກັບກູ້ ລບຕ.<br>b. ສ້າງລະບົບຕິດຕາມແຫ່ງຊາດ ສຳລັບບັນດາໂຄງການເກັບກູ້ ລບຕ. | i) ດຳເນີນການສ້າງແຜນທີ່ບັນດາກິດຈະກຳເກັບກູ້ ລບຕ ແລະ ພັດທະນາແບບຟອມການລາຍງານການເກັບກູ້ ລບຕ ສຳລັບສູນກາງຂໍ້ມູນແຫ່ງຊາດກ່ຽວກັບ ລບຕ;<br>ii) ເກັບກຳບັນດາບົດລາຍງານ ແລະ ແຜນການ ຈາກບັນດາອົງການປະຕິບັດງານດ້ານ ລບຕ ຢ່າງເປັນປົກກະຕິ ແລະ ລວບລວມ, ພ້ອມທັງວິເຄາະຂໍ້ມູນເພື່ອໃຫ້ສາມາດເຫັນພາບລວມ ຂອງບັນກິດຈະກຳເກັບກູ້ ລບຕ ຢູ່ໃນ ສປປ ລາວ;<br>iii) ພັດທະນາຂອບເຂດຕິດຕາມລະດັບຊາດສຳລັບການເກັບກູ້ ລບຕ ໃນສປປ ລາວ ແລະ ດຳເນີນການຕິດຕາມກິດຈະກຳເກັບກູ້ເປັນແຕ່ລະໄລຍະ;<br>iv) ພັດທະນາບັນດາຕົວຊີ້ວັດ ຊຶ່ງໄດ້ຮັບຄວາມເຫັນພ້ອມກັນ ເພື່ອວັດແທກຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດຈຸດປະສົງ ແລະ ເປົ້າໝາຍຂອງແຜນຍຸດທະສາດແຫ່ງຊາດກ່ຽວກັບການແກ້ໄຂບັນຫາລະເບີດທີ່ບໍ່ທັນແຕກທີ່ຕົກຄ້າງໃນສປປ ລາວ. | ຫ້ອງການຄຄຊ ດ້ຍການສະໜັບສະໜູນຈາກໜ່ວຍງານເຮັດວຽກວິຊາການເກັບກູ້<br>ຫ້ອງຄຄຊ ດ້ວຍການສະໜັບສະໜູນຈາກໜ່ວຍງານເຮັດວຽກວິຊາການເກັບກູ້<br>ໜ່ວຍງານເກັບກູ້ ແລະ ໜ່ວຍງານຮັບປະກັນຄຸນນະພາບຂອງ ຄຄຊ.<br>ຫ້ອງການຄຄຊ ແລະ ໜ່ວຍງານເຮັດວຽກວິຊາການເກັບກູ້ |